ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0469 /ອຄ.ກອທ
ນະຄອນຫລວງວຽງຈັນ, ວັນທີ 05 ມີນາ 2012

# ຂໍ້ຕົກລົງ
## ວ່າດ້ວຍການຄຸ້ມຄອງຜະລິດຕະພັນອຸດສາຫະກຳ

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 01/99/ສພຊ, ລົງວັນທີ 3/4/1999.
- ອີງຕາມກົດໝາຍວ່າດ້ວຍມາດຕະຖານ ສະບັບເລກທີ 13/ສພຊ, ລົງວັນທີ 26/12/2007.
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງສະບັບເລກທີ 67/ນຍ, ລົງ ວັນທີ 12/4/2006.
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການເຕັກນິກ ແລະ ມາດຕະການໃນການຄຸ້ມຄອງ, ສິ່ງເສີມຜະລິດຕະພັນ ທີ່ຜ່ານຂະບວນການຜະລິດອອກຈາກໂຮງງານອຸດສາຫະກຳປຸງແຕ່ງທຸກປະເພດ, ທຸກຂະໜາດ ແລະ ທຸກຂະໜາດ ຢູ່ໃນ ສປປລາວ ໃຫ້ໄດ້ມາດຕະຖານ ໃນລະດັບທີ່ແນ່ນອນ ເພື່ອແນໃສ່ປົກປ້ອງສິດຜົນປະໂຫຍດຂອງຜູ້ຜະລິດ ແລະ ຜູ້ຊົມໃຊ້.

ມາດຕາ 2. ຄວາມໝາຍຂອງຄຳສັບ

1. ຜະລິດຕະພັນ ໝາຍເຖິງຜົນຜະລິດທີ່ໄດ້ຮັບ ໂດຍຜ່ານຂະບວນການຜະລິດຂອງໂຮງງານອຸດສາຫະກຳປຸງແຕ່ງ, ຊຶ່ງຢູ່ໃນຮູບແບບສຳເລັດຮູບ ແລະ ມີຄວາມກຽມພ້ອມສຳລັບການ ຊົມໃຊ້ຕາມຄວາມຕ້ອງການ.

2. **ມາດຕະຖານຜະລິດຕະພັນ** ໝາຍເຖິງຂໍ້ກຳນົດລາຍການຢ່າງໃດຢ່າງໜຶ່ງ ຫຼື ຫຼາຍຢ່າງກ່ຽວກັບ:

2.1. ຈຳພວກ, ແບບ, ຮູບຮ່າງ, ມິຕິ, ການຜະລິດ , ເຄື່ອງປະກອບ, ຄຸນນະພາບ, ຊັ້ນ, ສ່ວນປະກອບ, ຄວາມສາມາດ, ຄວາມທົນທານ, ຄວາມແຂງແກ່ນ ແລະ ຄວາມປອດໄພຂອງຜະລິດຕະພັນ.

2.2. ວິທີເຮັດ, ວິທີອອກແບບ, ວິທີຂຽນຮູບ, ວິທີໃຊ້, ວັດຖຸທີ່ຈະນຳມາເຮັດຜະລິດຕະພັນ ແລະ ຄວາມປອດໄພກ່ຽວກັບການຜະລິດຜະລິດຕະພັນ.

2.3. ຈຳພວກ, ແບບ, ຮູບຮ່າງ, ມິຕິຂອງຫີບຫໍ່ ຫຼື ສິ່ງບັນຈຸຊະນິດອື່ນລວມທັງການເຮັດຫີບຫໍ່ ແລະ ສິ່ງບັນຈຸຊະນິດອື່ນໆ, ວິທີການບັນຈຸ, ຫຸ້ມຫໍ່ ຫຼື ຜູກມັດ.

2.4. ວິທີທົດລອງ, ວິທີວິເຄາະ, ວິທີປຽບທຽບ, ວິທີກວດ, ວິທີທົດສອບ ແລະ ວິທີຊັ່ງ, ວິທີວັດແທກ ທີ່ກ່ຽວກັບຜະລິດຕະພັນ.

2.5. ຄຳສັບສະເພາະ, ຄຳສັບຫຍໍ້, ສັນຍາລັກ, ເຄື່ອງໝາຍ, ສີ, ເລກໝາຍ ແລະ ຫົວໜ່ວຍທີ່ໃຊ້ໃນທາງວິຊາການທີ່ກ່ຽວກັບຜະລິດຕະພັນ.

2.6. ຂໍ້ກຳນົດລາຍການຢ່າງອື່ນທີ່ກ່ຽວກັບຜະລິດຕະພັນຕາມທີ່ລັດຖະມົນຕີປະກາດໃຊ້ ຫຼື ຄຳສັ່ງແນະນຳອື່ນໆ.

3. **ລະບຽບການເຕັກນິກ** ໝາຍເຖິງການກຳນົດລະດັບ, ຂອບເຂດຄຸນລັກສະນະສະເພາະທາງດ້ານເຕັກນິກຂອງຜະລິດຕະພັນອຸດສາຫະກຳ, ຊຶ່ງລະບຸເຖິງຄຸນນະພາບ; ການດຳເນີນງານ; ຄວາມປອດໄພ; ສຸຂະນາໄມ; ສຸຂະພາບ; ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ບໍລິໂພກ; ປົກປັກຮັກສາສິ່ງແວດລ້ອມ; ຜົນປະໂຫຍດ ແລະ ຄວາມໝັ້ນຄົງຂອງຊາດ.

4. **ຄຸນນະພາບ** ໝາຍເຖິງຄຸນລັກສະນະໂດດເດັ່ນ, ລັກສະນະປະຈຳ ຫຼື ໝາຍເຖິງຂີດຄວາມສາມາດເດັ່ນຊັດຂອງຜະລິດຕະພັນອຸດສາຫະກຳ ທີ່ຕອບສະໜອງຄວາມຕ້ອງການຢ່າງໃດຢ່າງໜຶ່ງຂອງຜູ້ຊົມໃຊ້ ໂດຍຜ່ານຂະບວນການດຳເນີນງານໃຫ້ເປັນໄປຕາມຂໍ້ກຳນົດທີ່ຕ້ອງການ.

5. **ຄວາມສອດຄ່ອງ** ໝາຍເຖິງຄຸນນະພາບຜະລິດຕະພັນອຸດສາຫະກຳກົງກັບເງື່ອນໄຂທີ່ໄດ້ກຳນົດທາງເຕັກນິກ ຫຼື ເປັນໄປຕາມມາດຕະຖານ ທີ່ກຳນົດ.

6. **ການຢັ້ງຢືນ** ໝາຍເຖິງຂະບວນການ ຫຼື ຂັ້ນຕອນຂອງການດຳເນີນວຽກງານເພື່ອການຢັ້ງຢືນເຕັກນິກຜະລິດຕະພັນ.

7. ໃບຢັ້ງຢືນ ໝາຍເຖິງເອກະສານຢັ້ງຢືນເຕັກຜະລິດຕະພັນທີ່ຜະລິດອອກຈາກໂຮງງານຢູ່ໃນ ສປປ ລາວ ໂດຍຜ່ານຂະບວນການຢັ້ງຢືນ.

8. ກະຊວງ ໝາຍເຖິງກະຊວງອຸດສາຫະກຳ ແລະ ການຄ້າ.

9. ໂຮງງານ ໝາຍເຖິງໂຮງງານອຸດສາຫະກຳປຸງແຕ່ງ.

ມາດຕາ 3. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາຜະລິດຕະພັນອຸດສາຫະກຳທຸກປະເພດ, ທຸກຊະນິດ ແລະ ທຸກຂະໜາດ ທີ່ຜະລິດຢູ່ໃນ ສປປ ລາວ.

## ໝວດທີ II
## ການເຄື່ອນໄຫວການຜະລິດ

ມາດຕາ 4. ແຜນການເຄື່ອນໄຫວການຜະລິດປະຈຳປີຂອງໂຮງງານ

ຜູ້ດຳເນີນກິດຈະການໂຮງງານ ທຸກປະເພດ, ທຸກຂະໜາດ ຕ້ອງສ້າງແຜນການເຄື່ອນໄຫວປະຈຳປີຂອງໂຮງງານຕາມທີ່ໄດ້ກຳນົດໃນມາດຕາ 05 ຂໍ້ທີ 09 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງສະບັບເລກທີ 1301/ອຄ, ລົງວັນທີ 30 ກໍລະກົດ 2007; ຊຶ່ງລາຍລະອຽດມີດັ່ງຕໍ່ໄປນີ້:

1. ແຜນການຜະລິດ ( ອ1) ໂດຍອີງໃສ່ກຳລັງການຜະລິດຕົວຈິງຂອງໂຮງງານ;
2. ແຜນການຈຳໜ່າຍຜະລິດຕະພັນ (ອ2);
3. ແຜນການຄວາມຕ້ອງການວັດຖຸດິບປະຈຳປີ (ອ3);
4. ໃບຄິດໄລ່ ລາຄາສຳເລັດຮູບຕໍ່ຫົວໜ່ວຍຜະລິດຕະພັນ (ອ4);
5. ກຳນົດໝາຍເສດຖະກິດ-ເຕັກນິກການສິ້ນເປືອງຕໍ່ຫົວໜ່ວຍຜະລິດຕະພັນ (ອ7);
6. ສະຫຼຸບການນຳເຂົ້າວັດຖຸດິບ, ອາໄຫລ່, ອຸປະກອນ, ຊິ້ນສ່ວນ, ເຄື່ອງຈັກອຸດສາຫະກຳ (ອ6).

ສຳລັບຜະລິດຕະພັນບາງປະເພດ, ບາງຊະນິດ ໃຫ້ນຳໃຊ້ໃບຢັ້ງຢືນຜະລິດຕະພັນ (ອ5) ເຊັ່ນ: ຜະລິດຕະພັນໄມ້ ຫຼື ຜະລິດຕະພັນອື່ນຕາມຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະ.

ຜູ້ດຳເນີນກິດຈະການໂຮງງານ ຕ້ອງສະເໜີແຜນການທັງໝົດ ດັ່ງທີ່ໄດ້ມີການລະບຸໃນວັກທີໜຶ່ງຂອງມາດຕານີ້ ຕໍ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ກ່ອນເລີ່ມຕົ້ນສົກປີງົບປະມານຂອງທຸກໆປີຢ່າງໜ້ອຍ 60 ວັນ; ຊຶ່ງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຕ້ອງດຳເນີນການກວດກາຄວາມຖືກຕ້ອງ, ຄົບຖ້ວນ, ສອດຄ່ອງ ກ້າວໄປເຖິງການຮັບຮອງ ແລະ ສັງລວມແຜນການນັ້ນ.

ແຜນການເຄື່ອນໄຫວການຜະລິດປະຈຳປີຂອງໂຮງງານສາມາດດັດແກ້ໄດ້ໜຶ່ງຄັ້ງຕໍ່ປີ.

ມາດຕາ 5. ການຮັບຮອງແຜນການເຄື່ອນໄຫວປະຈຳປີຂອງໂຮງງານ

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ມີສິດ ແລະ ໜ້າທີ່ພິຈາລະນາຮັບຮອງຄວາມຖືກຕ້ອງ ຂອງແຜນການເຄື່ອນໄຫວປະຈຳປີຂອງໂຮງງານ ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ເພື່ອເປັນບ່ອນອີງໃນການເຄື່ອນໄຫວທຸລະກິດຂອງໂຮງງານ ແລະ ວຽກງານອື່ນທີ່ກ່ຽວຂ້ອງ.

ໂຮງງານຕ້ອງເຄື່ອນໄຫວການຜະລິດທຸລະກິດຂອງຕົນເອງໃຫ້ສອດຄ່ອງກັບຈຸດປະສົງ ແລະ ເປົ້າໝາຍຂອງແຜນການເຄື່ອນໄຫວປະຈຳປີທີ່ໄດ້ຜ່ານການຮັບຮອງເທົ່ານັ້ນ.

ມາດຕາ 6. ການຜະລິດ ແລະ ການຈຳໜ່າຍຜະລິດຕະພັນ

ການຜະລິດ ແລະ ການຈຳໜ່າຍຜະລິດຕະພັນ ຕ້ອງເປັນໄປຕາມລະບຽບການເຕັກນິກ ຫຼື/ແລະ ກົດການຈັດຕັ້ງປະຕິບັດ ເພື່ອເຮັດໃຫ້ຜະລິດຕະພັນມີຄວາມສອດຄ່ອງຕາມການກຳນົດທີ່ຕ້ອງການ, ຕາມມາດຕະຖານຂອງໂຮງງານ ຫຼື ມາດຕະຖານແຫ່ງຊາດ ຫຼື ມາດຕະຖານຕ່າງປະເທດ ຫຼື ມາດຕະຖານລະດັບພາກພື້ນ ຫຼື ມາດຕະຖານສາກົນຕາມຄວາມເໝາະສົມ.

ມາດຕາ 7. ການສັງລວມຂໍ້ມູນສະຖິຕິຜະລິດຕະພັນ

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ຕ້ອງແນະນຳບັນດາໂຮງງານ ທີ່ໄດ້ມີການເຄື່ອນໄຫວການຜະລິດທຸລະກິດຕາມແຜນການເຄື່ອນໄຫວປະຈຳປີ ທີ່ສອດຄ່ອງກັບເງື່ອນໄຂທີ່ໄດ້ກຳນົດໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ເພື່ອທຳການສະຫຼຸບປະຈຳງວດ, ປະຈຳ 6 ເດືອນ ແລະ ປະຈຳປີ ໃຫ້ເປັນປົກກະຕິ. ພ້ອມດຽວກັນນີ້, ໂຮງງານຕ້ອງສົ່ງບົດສະຫຼຸບດັ່ງກ່າວໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ໃຫ້ທັນຕາມກຳນົດເວລາທີ່ຕ້ອງການ.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ຕ້ອງສະຫລຸບ-ສັງລວມຂໍ້ມູນສະຖິຕິຜະລິດຕະພັນອຸດສາຫະກຳຂອງບັນດາໂຮງງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ແກ່ກະຊວງອຸດສາຫະກຳ ແລະ ການຄ້າ (ກົມອຸດສາຫະກຳ ແລະ ຫັດຖະກຳ) ຄື:

- ສຳລັບ 06 ເດືອນຕົ້ນປີແມ່ນບໍ່ໃຫ້ກາຍວັນທີ 15 ມີນາ ຂອງທຸກປີ;
- ສຳລັບ 06 ເດືອນທ້າຍປີ ແມ່ນບໍ່ໃຫ້ກາຍວັນທີ 15 ກັນຍາ ຂອງທຸກປີ.

# ໝວດທີ III
# ການຢັ້ງຢືນເຕັກນິກຜະລິດຕະພັນ

ມາດຕາ 8. **ເງື່ອນໄຂໃນການສະເໜີຂໍການຢັ້ງຢືນ**

ການຢັ້ງຢືນເຕັກຜະລິດຕະພັນ ແມ່ນດຳເນີນໂດຍຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍວ່າດ້ວຍມາດຕະຖານ, ຊຶ່ງຜະລິດຕະພັນ ທີ່ຈະນຳສະເໜີຂໍການຢັ້ງຢືນ ຕ້ອງ ຢູ່ໃນເງື່ອນໄຂດັ່ງນີ້:

1. ຜະລິດຕະພັນຕ້ອງມີສັດສ່ວນທີ່ຜະລິດ ຫຼື ປະກອບຂຶ້ນພາຍໃນປະເທດຕາມຄວາມສາມາດຂອງວິຊາການ ແລະ ເຕັກໂນໂລຊີ ທີ່ມີໃຊ້ໃນຂະນະນັ້ນ ແລະ ມີມູນຄ່າເພີ່ມບໍ່ຕ່ຳກ່ວາ 30%.
2. ຜະລິດຕະພັນນັ້ນຕ້ອງໄດ້ຕາມມາດຕະຖານ ແລະ ລະບຽບການເຕັກນິກຂອງ ສປປ ລາວ, ຕ່າງປະເທດ ຫຼື ມາດຕະຖານສາກົນ, ມາດຕະຖານ ຫຼື ຂໍ້ກຳນົດຄຸນນະພາບຂອງສະຖາບັນທີ່ເຊື່ອຖືໄດ້ ຫຼື ຂໍ້ກຳນົດຄຸນນະພາບຂອງອົງການຈັດຕັ້ງພາຍໃນປະເທດໂດຍຄຳນຶງເຖິງລາຍລະອຽດຂອງໜ່ວຍງານທີ່ຈະນຳໃຊ້ຜະລິດຕະພັນນັ້ນ.
3. ເງື່ອນໄຂອື່ນໆ:

3.1. ເປັນຜະລິດຕະພັນທີ່ລັດຖະບານຍັງບໍ່ທັນໄດ້ປະກາດໃຊ້ມາດຕະຖານແຫ່ງຊາດ.

3.2. ບໍ່ຈັດຢູ່ໃນປະເພດຍວດຍານພາຫານະທາງບົກທີ່ມີເຄື່ອງຈັກ.

3.3. ເປັນຜະລິດຕະພັນທີ່ໄດ້ຜະລິດສຳເລັດຮູບແລ້ວ.

3.4. ກຳມະວິທີການຜະລິດເໝາະສົມ ແລະ ສາມາດຄວບຄຸມຄຸນນະພາບໄດ້ຢ່າງສະໝ່ຳສະເໝີ.

3.5. ບໍ່ແມ່ນຜະລິດຕະພັນທີ່ນຳກັບຄືນມາໃຊ້ໃໝ່ (re-use).

3.6. ມີໃບອະນຸຍາດດຳເນີນກິດຈະການໂຮງງານ ໃນກໍລະນີທີ່ກິດຈະການຂອງໂຮງງານຢູ່ໃນເຄືອຄ່າຍການຄຸ້ມຄອງ ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງສະບັບເລກທີ 1301/ ອຫ, ລົງວັນທີ 30 ກໍລະກົດ 2007.

ມາດຕາ 9. **ການກຳນົດມູນຄ່າເພີ່ມ ແລະ ສັດສ່ວນຕົ້ນທຶນການຜະລິດຢູ່ພາຍໃນປະເທດ**

ວິທີການຄຳນວນມູນຄ່າເພີ່ມ ແລະ ສັດສ່ວນຕົ້ນທຶນການຜະລິດຢູ່ໃນປະເທດໃຫ້ນຳໃຊ້ສູດຄິດໄລ່ດັ່ງນີ້ :

1. ມູນຄ່າເພີ່ມ ( Value Added )

$$\text{ມູນຄ່າເພີ່ມ} : = \frac{\text{ລາຄາຂາຍ} - (\text{ຄ່າວັດຖຸດິບ} + \text{ຄ່າພະລັງງານ} + \text{ຄ່າວັດຖຸຫຸ້ມຫໍ່})}{\text{ລາຄາຂາຍ}} \times 100$$

(Value Added)

- ລາຄາຂາຍ = ຕົ້ນທຶນການຜະລິດ+ຄ່າໃຊ້ຈ່າຍໃນການຂາຍ+ຄ່າພາສີ+ກຳໄລ
  (ມາດຕະຖານ )
- ຄ່າວັດຖຸດິບ = ວັດຖຸດິບພາຍໃນ + ຄ່າວັດຖຸດິບຈາກຕ່າງປະເທດ + ພາສີນຳເຂົ້າ
- ຕົ້ນທຶນການຜະລິດ = ຄ່າວັດຖຸດິບ + ຄ່າໃຊ້ຈ່າຍໃນການຜະລິດ
- ຄ່າໃຊ້ຈ່າຍໃນການຜະລິດ = ຄ່າແຮງງານ + ຄ່າພະລັງງານ + ຄ່າຫຼຸຍຫ້ຽນ+ ຄ່າວັດຖຸຫຸ້ມຫໍ່ + (ຄ່າໃຊ້ຈ່າຍອື່ນໆໃນການຜະລິດ - ຄ່າສິດທິ)

2. ສັດສ່ວນຕົ້ນທຶນການຜະລິດຢູ່ພາຍໃນ

$$\text{ສັດສ່ວນຕົ້ນທຶນການຜະລິດພາຍໃນ} := \frac{\text{(ຄ່າວັດຖຸດິບທີ່ຜະລິດຢູ່ພາຍໃນປະເທດ+ຄ່າໃຊ້ຈ່າຍໃນການຜະລິດ)}}{\text{ຕົ້ນທຶນການຜະລິດ}} \times 100$$

**(Local Content)**

ຫມາຍເຫດ: *ຄ່າຫຼຸຍຫ້ຽນໃຫ້ຄຳນວນຕາມກົດໝາຍ ( ສ່ວຍສາອາກອນ ຫຼື ກົດໝາຍວ່າດ້ວຍມູນຄ່າເພີ່ມ )*

ມາດຕາ 10. ຂໍ້ມູນ ແລະ ຫຼັກຖານທີ່ເປັນບ່ອນອີງໃຫ້ແກ່ການພິຈາລະນາຂໍການຢັ້ງຢືນ

ຜູ້ດຳເນີນກິດຈະການໂຮງງານໃນ ສປປລາວ ສາມາດພົວພັນເອົາຊຸດເອກະສານນຳພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ແລ້ວປະກອບເອກະສານດັ່ງກ່າວເພື່ອສະເໜີພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ຕາມລາຍການລຸ່ມນີ້:

1. ໃບຄຳຮ້ອງຂໍການຢັ້ງຢືນເຕັກນິກຜະລິດຕະພັນ(ແບບຟອມ 01) ຈຳນວນ 1 ຊຸດ.
2. ໃບຄິດໄລ່ສັດສ່ວນຕົ້ນທຶນການຜະລິດ ຢູ່ພາຍໃນປະເທດ (Local Content) (ແບບຟອມ 02) ຈຳນວນ 1 ຊຸດ.
3. ໃບຄິດໄລ່ມູນຄ່າເພີ່ມ (ແບບຟອມ 03) ຈຳນວນ 1 ຊຸດ.
4. ບົດລາຍງານການຄວບຄຸມຄຸນນະພາບທີ່ລະບຸເຖິງຄວາມສອດຄ່ອງ (ແບບຟອມ 04) ຈຳນວນ 1 ຊຸດ.
5. ໃບຢັ້ງຢືນການສອບທຽບເຄື່ອງຈັກ ແລະ ອຸປະກອນທີ່ໃຊ້ໃນການທົດລອງ ຈຳນວນ 1 ຊຸດ.
6. ໃບຢັ້ງຢືນທີ່ຢູ່ (ຖ້າຕ້ອງການ) ຈຳນວນ 1 ຊຸດ.
7. ສຳເນົາໃບອະນຸຍາດຕ່າງໆ (ໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ, ໃບທະບຽນອາກອນ ແລະ ໃບອະນຸຍາດດຳເນີນກິດຈະການໂຮງງານ) ຈຳນວນ 1 ຊຸດ.
8. ເອກະສານອື່ນໆ (ຖ້າມີຄວາມຈຳເປັນຕື່ມເຊັ່ນ: ໃບອະນຸຍາດລິຂະສິດ ...).

**ມາດຕາ 11. ຂັ້ນຕອນການພິຈາລະນາອອກໃບຢັ້ງຢືນ**

ຜູ້ດໍາເນີນກິດຈະການໂຮງງານທີ່ມີຈຸດປະສົງຂໍການຢັ້ງຢືນ ຕ້ອງປະກອບຄໍາຮ້ອງ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມທີ່ໄດ້ກໍານົດຢູ່ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ແລ້ວສະເໜີຕໍ່ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫລວງ.

ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫລວງ ມີໜ້າທີ່ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານ. ຫາກກວດພົບເຫັນສ່ວນທີ່ຍັງບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕ້ອງແນະນໍາໃຫ້ຜູ້ດໍາເນີນກິດຈະການໂຮງງານທັນທີ ເພື່ອປະກອບເອກະສານຄືນໃໝ່ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຄົບຖ້ວນ.

ເມື່ອຄໍາຮ້ອງ ແລະ ເອກະສານທີ່ກ່ຽວຂ້ອງຜ່ານການກວດກາ ແລະ ເຫັນວ່າມີຄວາມຖືກຕ້ອງ ແລະ ຄົບຖ້ວນເປັນທີ່ຮຽບຮ້ອຍແລ້ວ, ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫລວງ ຕ້ອງນັດໝາຍຄະນະກໍາມະການທີ່ກ່ຽວຂ້ອງລົງກວດກາເບິ່ງຕົວຈິງຢູ່ໃນໂຮງງານພາຍໃນໄລຍະເວລາ 10 ວັນລັດຖະການນັບແຕ່ວັນທີ່ໄດ້ຮັບຄໍາຮ້ອງ. ການກວດກາຕ້ອງລົງເລິກລວງກວາງດັ່ງນີ້:

- ລາຍການຕ່າງໆ ຕາມທີ່ໄດ້ລະບຸໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
- ຫຼັກຖານການຮັບຮອງຄຸນນະພາບ ຫຼື ການກວດກາຈາກໜ່ວຍງານທີ່ເຊື່ອຖືໄດ້;
- ເກັບຕົວຢ່າງຜະລິດຕະພັນ;
- ລາຍລະອຽດອື່ນໆ ຕາມທີ່ຄະນະກໍາມະການທີ່ຕ້ອງການ.

ຄ່າໃຊ້ຈ່າຍຕ່າງໆ ໃນການລົງກວດກາແມ່ນຜູ້ດໍາເນີນກິດຈະການເປັນຜູ້ຮັບຜິດຊອບ.

**ມາດຕາ 12. ການທົດສອບ ແລະ ການທົດລອງຜະລິດຕະພັນ**

ຜະລິດຕະພັນທີ່ນໍາເອົາມາທົດສອບ ຫຼື ທົດລອງ, ຊຶ່ງຄະນະກໍາມະການໄດ້ເກັບຕົວຢ່າງມານັ້ນ ແລ້ວນໍາເອົາໄປທົດລອງຢູ່ຫ້ອງທົດລອງ ຫຼື ຫ້ອງວິໄຈ ຕາມແຕ່ລະປະເພດ, ແຕ່ລະຊະນິດ ແລະ ຕາມແຕ່ລະກໍລະນີ.

ການທົດສອບ ຫຼື ທົດລອງ ແມ່ນປະຕິບັດໃນຊຸດຕົວຢ່າງດຽວເທົ່ານັ້ນ, ຖ້າຜົນການທົດສອບ ຫຼື ທົດລອງບໍ່ເປັນໄປຕາມມາດຕະຖານ ຫຼື ຂໍ້ກໍານົດເຕັກນິກ ທີ່ໄດ້ກໍານົດໄວ້ ຖືວ່າຜະລິດຕະພັນນັ້ນບໍ່ລອດຄ່ອງ.

ກໍລະນີຜູ້ດໍາເນີນກິດຈະການໂຮງງານ ໄດ້ທໍາການທົດສອບ ແລະ ທົດລອງຜະລິດຕະພັນດ້ວຍຕົນເອງ ໃຫ້ລາຍງານຜົນການທົດສອບ ຫຼື ທົດລອງໃຫ້ຂະແໜງການອຸດສາຫະກໍາ ແລະ ການຄ້າ ພິຈາລະນາ.

ການທົດສອບ ຫຼື ທົດລອງແມ່ນສາມາດປະຕິບັດໄດ້ຈາກຫ້ອງທົດລອງທີ່ມີຢູ່ຂັ້ນມະຫາພາກ ແລະ ຈຸລະພາກ ຫຼື ຫ້ອງທົດລອງຢູ່ຕ່າງປະເທດ ທີ່ສາມາດເຊື່ອຖືໄດ້.

ຄ່າໃຊ້ຈ່າຍຕ່າງໆ ທີ່ກ່ຽວຂ້ອງກັບຂະບວນການທົດລອງ/ທົດສອບ ແມ່ນມອບຢູ່ໃນຄວາມຮັບຜິດຊອບຂອງຜູ້ດຳເນີນກິດຈະການໂຮງງານ ທີ່ມີຈຸດປະສົງຂໍການຢັ້ງຢືນລິດຕະພັນນັ້ນ.

**ມາດຕາ 13. ການປະເມີນຄວາມສອດຄ່ອງ**

ການປະເມີນຄວາມສອດຄ່ອງ ແມ່ນສາມາດປະຕິບັດໄດ້ ໂດຍອີງການຈັດຕັ້ງໃດໜຶ່ງ ທີ່ສ້າງຂຶ້ນຢູ່ໃນຂະແໜງການຂອງລັດ ຫຼື ພາກສ່ວນທຸລະກິດທີ່ກ່ຽວຂ້ອງ, ຊຶ່ງມີພາລະບົດບາດໃນການດຳເນີນການທົດສອບ ຫຼື ທົດລອງ ຜະລິດຕະພັນຕາມຂະບວນການທີ່ໄດ້ລະບຸໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ ກັບມາດຕະຖານ ຫຼື ລະບຽບການເຕັກນິກ (ມາດ ຕາ 45, ກົດໝາຍວ່າດ້ວຍມາດຕະຖານ). ຜົນການທົດລອງ ຫຼື ທົດສອບຜະລິດຕະພັນໃດບໍ່ມີຄວາມສອດຄ່ອງຕາມລະບຽບການ ຫຼື ຕາມມາດຕະຖານການກຳນົດ, ຜະລິດຕະພັນນັ້ນຈະບໍ່ໄດ້ຮັບການຢັ້ງຢືນ.

## ໝວດທີ IV
## ໃບຢັ້ງຢືນເຕັກນິກຜະລິດຕະພັນ

**ມາດຕາ 14. ການອອກໃບຢັ້ງຢືນ**

ຜະລິດຕະພັນ ທີ່ໄດ້ຜ່ານຂະບວນການຕາມການກຳນົດໃນໝວດທີ III ຂອງຂໍ້ຕົກລົງສະບັບນີ້ ໂດຍມີຄວາມສອດຄ່ອງກັບມາດຕະຖານ ຫຼື ຂໍ້ກຳນົດເຕັກນິກ ທີ່ນຳໃຊ້ ຈະໄດ້ຮັບການຢັ້ງຢືນຢ່າງເປັນທາງການພາຍໃນ 10 ວັນລັດຖະການ ນັບຕັ້ງແຕ່ວັນທີໄດ້ຮັບເອກະສານເປັນຕົ້ນໄປ, ຊຶ່ງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ມີສິດອອກໃບຢັ້ງຢືນ.

**ມາດຕາ 15. ອາຍຸການໃຊ້ງານຂອງໃບຢັ້ງຢືນ**

ອາຍຸການຂອງໃບຢັ້ງຢືນແມ່ນ 03 ປີ ແລະ ສາມາດຕໍ່ໄດ້. ຜູ້ດຳເນີນກິດຈະການໂຮງງານ ທີ່ມີຈຸດປະສົງຕໍ່ໃບຢັ້ງຢືນຕ້ອງປະຕິບັດຕາມມາດຕາ 9, ມາດຕາ 10 ແລະ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້ ເພື່ອຂໍຢັ້ງຢືນໃໝ່ພາຍໃນ 60 ວັນ ກ່ອນໃບຢັ້ງຢືນຈະໝົດອາຍຸ. ການຂໍຕໍ່ໃບຢັ້ງຢືນແມ່ນປະຕິບັດເຊັ່ນດຽວກັນກັບການຂໍຢັ້ງຢືນຄັ້ງທີ່ໜຶ່ງ.

**ມາດຕາ 16. ໃບຢັ້ງຢືນເສຍຫາຍ, ເປິະເປື້ອນ**

ກໍລະນີໃບຢັ້ງຢືນເສຍຫາຍ ຫຼື ເປິະເປື້ອນ, ຜູ້ໄດ້ຮັບໃບຢັ້ງຢືນ ມີສິດສະເໜີຫາພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ພາຍໃນ 30 ວັນນັບແຕ່ວັນທີ່ຮູ້ວ່າໃບຢັ້ງຢືນເສຍຫາຍ ຫຼື ເປິະເປື້ອນ ເພື່ອຂໍຮັບໃບຢັ້ງຢືນຄືນໃໝ່.

ມາດຕາ 17. ການຍົກເລີກໃບຢັ້ງຢືນ

ໃບຢັ້ງຢືນຖືກຍົກເລີກໃນກໍລະນີດັ່ງຕໍ່ໄປນີ້:

1. ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫລວງ ສັ່ງຍົກເລີກ;
2. ໃບຢັ້ງຢືນຫມົດອາຍຸ;
3. ຜູ້ຜະລິດຍົກຍ້າຍສະຖານທີ່ຜະລິດ ຫລື ປ່ຽນຊື່;
4. ຜູ້ໄດ້ຮັບໃບຢັ້ງຢືນຢຸດຕິການດໍາເນີນກິດຈະການ;
5. ຜູ້ໄດ້ຮັບໃບຢັ້ງຢືນ ຂໍຍົກເລີກການນໍາໃຊ້ການຢັ້ງຢືນ;
6. ປະກາດ ຫຼື ຄໍາສັ່ງນໍາໃຊ້ມາດຕະຖານໃຫມ່, ແກ້ໄຂ ຫຼື ຍົກເລີກມາດຕະຖານສໍາລັບຜະລິດຕະພັນອຸດສາຫະກໍາຊະນິດນັ້ນ.

ມາດຕາ 18. ຂໍ້ຫ້າມ

ຫ້າມຜູ້ດໍາເນີນກິດຈະການໂຮງງານປະຕິບັດດັ່ງນີ້:

1. ນໍາໃຊ້ໃບຢັ້ງຢືນໂດຍບໍ່ໄດ້ຮັບອະນຸຍາດ;
2. ປອມແປງໃບຢັ້ງຢືນ;
3. ຜະລິດ ແລະ ຈໍາໜ່າຍຜະລິດຕະພັນທີ່ບໍ່ສອດຄ່ອງກັບການທີ່ໄດ້ລະບຸໃນຜະລິດຕະພັນເຊັ່ນ: ຂະໜາດ, ນໍ້າໜັກ, ຊັ້ນຄຸນນະພາບ ແລະ ອື່ນໆ;
4. ນໍາເອົາຜະລິດຕະພັນທີ່ໄດ້ຮັບອະນຸຍາດຜະລິດເພື່ອສົ່ງອອກມາຈໍາໜ່າຍພາຍໃນໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການອຸດສາຫະກໍາ ແລະ ການຄ້າ ຫຼື ຂະແໜງການອື່ນທີ່ກ່ຽວຂ້ອງ.

ມາດຕາ 19. ໜ້າທີ່ຂອງຜູ້ໄດ້ຮັບໃບຢັ້ງຢືນ

ຜູ້ທີ່ໄດ້ຮັບໃບຢັ້ງຢືນ ຕ້ອງໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ ຈາກຂະແໜງການອຸດສາຫະກໍາ ແລະ ການຄ້າ ຫຼື ພາກສ່ວນທີ່ກ່ຽວຂ້ອງໃນການກວດກາ ແລະ ຕິດຕາມຂະບວນການຜະລິດເພື່ອໃຫ້ມີຄວາມຫມັ້ນໃຈວ່າມີຄຸນນະພາບເປັນໄປຕາມມາດຕະຖານ ຫຼື ຂໍ້ກໍານົດທາງເຕັກນິກທີ່ນໍາໃຊ້.

ຜູ້ທີ່ໄດ້ຮັບໃບຢັ້ງຢືນ ຕ້ອງບົວລະບັດຮັກສາລະບົບການຜະລິດ ໃຫ້ຢູ່ໃນສະພາບທີ່ສາມາດເຄື່ອນໄຫວປົກກະຕິຢ່າງສະຫມໍ່າສະເຫມີ. ກໍລະນີທາງມີການປ່ຽນແປງ ຫຼື ມີຄວາມຜິດປົກກະຕິ ຕ້ອງປັບປຸງລະບົບໃຫ້ຄືນສູ່ສະພາບເດີມ ຫຼື ສະພາບທີ່ດີກວ່າຢ່າງທັນການ.

## ໝວດທີ V

## ການຕິດຕາມ ແລະ ກວດກາ

ມາດຕາ 20. ການຕິດຕາມ ແລະ ກວດກາ

ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ມີໜ້າທີ່ຕິດຕາມ ແລະ ກວດກາຜະລິດຕະພັນອຸດສາຫະກຳ ເປັນປະຈຳ (ມາດຕາ 90 ແລະ 96 ກົດໝາຍວ່າດ້ວຍມາດຕະຖານ), ນອກຈາກນັ້ນກໍ່ຍັງມີໜ້າທີ່ຕິດຕາມ ແລະ ກວດກາຂະບວນການຜະລິດຂອງໂຮງງານ ເພື່ອຮັບປະກັນໃຫ້ຜະລິດຕະພັນມີຄຸນນະພາບດີ, ມີຄວາມປອດໄພ ແລະ ໄດ້ມາດຕະຖານຕາມທີ່ໄດ້ກຳນົດໄວ້ ແລະ ຫຼີກລ່ຽງຜົນເສຍຫາຍທີ່ອາດຈະເກີດຂຶ້ນ ໃນເວລາໃຊ້ງານຂອງຜະລິດຕະພັນນັ້ນໆ. ພ້ອມກັນນີ້ ກໍ່ ເພື່ອສ້າງຄວາມໝັ້ນໃຈວ່າຂະບວນການຜະລິດນັ້ນເປັນໄປຕາມມາດຕະຖານ ຫຼື ຂໍ້ກຳ ນົດເຕັກນິກທີ່ໄດ້ຜ່ານການຢັ້ງຢືນໄປແລ້ວນັ້ນ.

ກໍລະນີທີ່ເຫັນວ່າຜະລິດຕະພັນອຸດສາຫະກຳ ທີ່ຜະລິດ ຫຼື ຈຳໜ່າຍ ຫາກບໍ່ມີຄວາມປອດໄພ, ມີຜົນກະທົບຕໍ່ສຸຂະພາບ, ຊີວິດ ຫຼື ຊັບສິນຂອງຜູ້ບໍລິໂພກ, ຜູ້ຜະລິດ ຫຼື ຜູ້ຈຳໜ່າຍ ຕ້ອງຮຽກເກັບຄືນຜະລິດຕະພັນທີ່ຈຳໜ່າຍອອກນັ້ນຢ່າງທັນທີ ແລະ ຮັບຜິດຊອບທັງໝົດຕໍ່ການເສຍຫາຍຕ່າງໆ ທີ່ເກີດຂຶ້ນ.

## ໝວດທີ VI

## ການຍ້ອງຍໍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 21. ການຍ້ອງຍໍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຫົວໜ່ວຍການຜະລິດ, ບໍລິສັດ, ໂຮງງານ ທີ່ມີຜົນງານໃນການຊອກເຫັນ ແລະ ລາຍງານ ການລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການຕ່າງໆ ກ່ຽວກັບມາດຕະຖານຜະລິດຕະພັນໃຫ້ແກ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຈະໄດ້ຮັບການຍ້ອງຍໍ ຫຼື ບຳເນັດຕາມແຕ່ລະກໍລະນີ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຫົວໜ່ວຍການຜະລິດ, ບໍລິສັດ, ໂຮງງານ ທີ່ມີຜົນງານດີເດັ່ນໃນການຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາຜະລິດຕະພັນອຸດສາຫະກຳຕາມຫຼັກການ, ລະບຽບການ ແລະ ມາດຕະຖານ ຈະໄດ້ຮັບການປະຕິບັດນະໂຍບາຍ ແລະ ຍ້ອງຍໍຕາມຄວາມເໝາະສົມ.

ມາດຕາ 22. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຫົວໜ່ວຍການຜະລິດ, ບໍລິສັດ, ໂຮງງານທາກ ລະເມີດ ຫຼື ບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຫຼື ມີການປອມແປງຜະລິດຕະພັນ ແລະ ເອກະສານທີ່ກ່ຽວຂ້ອງຈະຖືກກ່າວເຕືອນ, ສຶກສາອົບຮົມ, ໃຊ້ແທນຄ່າເສຍຫາຍ, ປັບໃໝ ແລະ ປະຕິບັດມາດຕະການທາງອາຍາຕາມ ມາດຕາ 24, ມາດຕາ 25, ມາດຕາ 26 ແລະ ມາດຕາ 27 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງສະບັບເລກທີ 1301/ ອຄ, ລົງວັນທີ 30/7/2007 ແລະ ມາດຕາ 54, ມາດຕາ 55, ມາດຕາ 56 ແລະ ມາດຕາ 57 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງສະບັບເລກທີ 01/99/ສພຊ, ລົງວັນທີ 3/4/1999.

## ໝວດທີ VII
## ບົດບັນຍັດສຸດທ້າຍ

ມາດຕາ 23. ການຈັດຕັ້ງປະຕິບັດ

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ , ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 24. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ